ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 22 /ລບ
ນະຄອນຫຼວງວຽງຈັນ, ວັນທີ 05.02.2019.

# ດຳລັດ
## ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013;
- ອີງຕາມໜັງສືສະເໜີ ສະບັບເລກທີ 4745/ຮສສ, ລົງວັນທີ 13 ທັນວາ 2018 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

## ລັດຖະບານ ອອກດຳລັດ :

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອປ້ອງກັນບໍ່ໃຫ້ເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ທີ່ອາດຈະເກີດຂຶ້ນ, ສ້າງສະພາບແວດລ້ອມທີ່ດີ, ບໍ່ມີຄວາມສ່ຽງຕໍ່ສຸຂະພາບ, ສົ່ງເສີມວຽກງານທີ່ມີຄຸນຄ່າ, ເປັນທຳ ແລະ ຍົກສູງຄຸນນະພາບ ການຜະລິດ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ເຮັດໃຫ້ຊີວິດການເປັນຢູ່ຂອງຜູ້ອອກແຮງງານ ໃຫ້ນັບມື້ດີຂຶ້ນ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການສົ່ງເສີມການລົງທຶນ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ຄວາມປອດໄພ ແລະ ສຸຂະພາບແຮງງານ

ຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນກິດຈະກຳຮ່ວມລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໃນການຮັບປະກັນດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ ຊຶ່ງລວມມີ ການປະເມີນຄວາມສ່ຽງດ້ານສະພາບແວດລ້ອມ ຂອງການເຮັດວຽກ, ມາດຕະການທີ່ເໝາະສົມ ເພື່ອຫຼຸດຜ່ອນໄພອັນຕະລາຍ ແລະ ຄວາມສ່ຽງ, ວິທີປ້ອງກັນອຸປະຕິເຫດແຮງງານ, ປ້ອງກັນການບາດເຈັບ ແລະ ປ້ອງກັນບໍ່ໃຫ້ເກີດພະຍາດອາຊີບ ແລະ ການສ້າງໃຫ້ເປັນວັດທະນາທຳຄວາມປອດໄພ ໃນສະຖານທີ່ເຮັດວຽກເທື່ອລະກ້າວ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຄວາມປອດໄພແຮງງານ ໝາຍເຖິງ ການປາສະຈາກຄວາມອັນຕະລາຍ, ຄວາມສ່ຽງ, ການບາດເຈັບ ແລະ ການສູນເສຍທາງດ້ານຮ່າງກາຍ ແລະ ຈິດໃຈ;
2. ສຸຂະພາບແຮງງານ ໝາຍເຖິງ ການມີສຸຂະອານາໄມ ໃນການເຮັດວຽກທີ່ດີ, ບໍ່ມີຜົນກະທົບທາງລົບຕໍ່ສຸຂະ

ພາບ ທາງດ້ານຮ່າງກາຍ ແລະ ຈິດໃຈ ຂອງຜູ້ອອກແຮງງານ;

3. ການປະເມີນຄວາມສ່ຽງ ໝາຍເຖິງ ຂະບວນການຄາດຄະເນລະດັບຄວາມເປັນໄປໄດ້ ທີ່ອາດຈະເກີດຄວາມ ອັນຕະລາຍ, ອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
4. ມາດຕະການປ້ອງກັນຄວາມປອດໄພ ແລະ ສຸຂະພາບແຮງງານ ໝາຍເຖິງ ການບໍລິຫານ, ການຄຸ້ມຄອງ, ການບໍລິການ ແລະ ການຈັດການໃນການວິເຄາະ, ວິໄຈ, ການບັງຄັບໃຊ້ກົດໝາຍ, ລະບຽບການ ແລະ ປະເມີນສະພາບແວດລ້ອມການເຮັດວຽກ ເພື່ອປ້ອງກັນບໍ່ໃຫ້ເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
5. ການວິນິໄສຄວາມປອດໄພ ແລະ ສຸຂະພາບແຮງງານ ໝາຍເຖິງ ການດຳເນີນການວິເຄາະຫາສາເຫດຄວາມອັນຕະລາຍ ແລະ ການປະເມີນຄວາມສ່ຽງໃດໜຶ່ງ ເພື່ອປ້ອງກັນການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ທີ່ອາດຈະເກີດຂຶ້ນ;
6. ຜູ້ຊ່ຽວຊານສະເພາະດ້ານ ໝາຍເຖິງ ບຸກຄົນທີ່ມີຄວາມຊຳນານດ້ານໃດໜຶ່ງ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນຕົ້ນ ນັກວິສະວະກອນ, ພະຍາບານ, ທ່ານໝໍ, ນັກວິໄຈ ແລະ ອື່ນໆ;
7. ສະຖານທີ່ເຮັດວຽກ ໝາຍເຖິງ ບ່ອນເຮັດວຽກ ທີ່ຜູ້ອອກແຮງງານປະຕິບັດໜ້າທີ່ ຊຶ່ງໃນຫົວໜ່ວຍແຮງງານໜຶ່ງ ອາດມີຫຼາຍບ່ອນເຮັດວຽກ;
8. ພະນັກງານຮັບຜິດຊອບດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ ໝາຍເຖິງ ຜູ້ອອກແຮງງານ ທີ່ໄດ້ຮັບການຝຶກອົບຮົມ, ມີປະກາສະນີຍະບັດ ຫຼື ການຢັ້ງຢືນຈາກສະຖາບັນ ຫຼື ອົງການຄຸ້ມຄອງແຮງງານ ຊຶ່ງຜູ້ໃຊ້ແຮງງານໄດ້ແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ;
9. ໜ່ວຍງານຮັບຜິດຊອບດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ ໝາຍເຖິງ ໜ່ວຍງານທີ່ປະກອບດ້ວຍຜູ້ຕາງໜ້າຜູ້ໃຊ້ແຮງງານ, ຜູ້ຕາງໜ້າຜູ້ອອກແຮງງານ ແລະ ພະນັກງານຮັບຜິດຊອບດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ;
10. ອົງການສາມຝ່າຍ ໝາຍເຖິງ ອົງການຜູ້ຕາງໜ້າເຮັດວຽກຮ່ວມກັນ ຊຶ່ງປະກອບດ້ວຍ ອົງການຕາງໜ້າລັດຖະບານ ໂດຍແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເສນາທິການ, ອົງການຜູ້ຕາງໜ້າຜູ້ອອກແຮງງານ ໂດຍແມ່ນສູນກາງສະຫະພັນກຳມະບານລາວ ແລະ ອົງການຜູ້ຕາງໜ້າຜູ້ໃຊ້ແຮງງານ ໂດຍແມ່ນສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
11. ເຄມີອັນຕະລາຍ ໝາຍເຖິງ ສານພິດ, ທາດເຄມີ ທີ່ກໍ່ໃຫ້ເກີດຜົນກະທົບອັນຮ້າຍແຮງ ຕໍ່ຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ໃນສະຖານທີ່ເຮັດວຽກ ແລະ ສະພາບແວດລ້ອມໃກ້ຄຽງ;
12. ເຄື່ອງໝາຍເຕືອນ ໝາຍເຖິງ ຂໍ້ມູນທີ່ເປັນຕົວອັກສອນ, ສັນຍາລັກ ຫຼື ຮູບພາບ ທີ່ສະແດງຄວາມເປັນອັນຕະລາຍ ຂອງຜະລິດຕະພັນ ຊຶ່ງກຳນົດໃຫ້ກົງກັບເປົ້າໝາຍ ເຊັ່ນ ເຕືອນບໍ່ໃຫ້ຢູ່ກ້ອງສາຍໄຟຟ້າແຮງສູງ ທີ່ມີຄວາມຮ້ອນ ຊຶ່ງຈະກໍ່ໃຫ້ເກີດອັນຕະລາຍຕໍ່ຜູ້ອອກແຮງງານ, ການຂົນສົ່ງ, ການເກັບຮັກສາ, ການນຳໃຊ້ ຊຶ່ງໃຊ້ຕິດ, ພິມ ຫຼື ຕິດແນບກັບພາຊະນະບັນຈຸຜະລິດຕະພັນເຄມີອັນຕະລາຍໂດຍກົງ ຫຼື ພາຍນອກຫີບ, ຫໍ່ຂອງຜະລິດຕະພັນ;
13. ການກຳຈັດ ໝາຍເຖິງ ການທຳລາຍ ເຊັ່ນ: ການຈູດເຜົາ, ຝັງດິນ ຫຼື ການກຳຈັດດ້ວຍວິທີອື່ນ ທີ່ເໝາະສົມ ລວມທັງການເກັບມ້ຽນທີ່ຖືກວິທີ;
14. ແຮງງານອິດສະລະ ໝາຍເຖິງ ການເຮັດວຽກໃຫ້ຕົນເອງ, ປະກອບກິດຈະການ ຫຼື ອາຊີບ ທີ່ເປັນເອກະລາດ ບໍ່ຂຶ້ນກັບໃຜ ແລະ ບໍ່ມີຜູ້ອອກແຮງງານ ເຮັດວຽກນຳຕົນເອງ;
15. ຜູ້ຮັບເໝົາຫຼັກ ໝາຍເຖິງ ຜູ້ທີ່ຕົກລົງຮັບຈະດຳເນີນງານທັງໝົດ ຫຼື ບາງສ່ວນຂອງວຽກງານໃດໜຶ່ງ ຈາກຜູ້ວ່າຈ້າງຈົນສຳເລັດ;
16. ຜູ້ຮັບເໝົາຍ່ອຍ ໝາຍເຖິງ ຜູ້ທີ່ເຮັດສັນຍາກັບຜູ້ຮັບເໝົາຫຼັກ ຫຼື ຜູ້ຮັບເໝົາຂັ້ນຕົ້ນ ໂດຍຮັບຈະດຳເນີນງານທັງໝົດ ຫຼື ແຕ່ບາງພາກສ່ວນ.

ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ

ລັດ ຖືເອົາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນບູລິມະສິດ ໃນການປົກປ້ອງຜູ້ອອກແຮງງານ ດ້ວຍການສະໜອງງົບປະມານ, ພາຫະນະ, ອຸປະກອນ, ເຕັກນິກທີ່ທັນສະໄໝ, ສ້າງພື້ນຖານໂຄງລ່າງ, ພັດທະນາ ແລະ ປະກອບຊັບພະຍາກອນມະນຸດ ເຂົ້າໃນວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ.

ລັດ ຊຸກຍູ້ ແລະ ສົ່ງເສີມການຄົ້ນຄວ້າ, ການນຳໃຊ້ວິທະຍາສາດ-ເຕັກນິກ, ການສະໜອງຂໍ້ມູນຂ່າວສານ ເຂົ້າໃນວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອມີວິທີປ້ອງກັນ ແລະ ແກ້ໄຂໃຫ້ທັນເວລາ, ມີປະສິດທິພາບ ປະສິດທິຜົນ.

ລັດ ສະໜັບສະໜູນການປັບປຸງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢ່າງຕໍ່ເນື່ອງ ດ້ວຍການປຶກສາຫາລືກັບບັນດາຜູ້ຕາງໜ້າຜູ້ໃຊ້ແຮງງານ ແລະ ຜູ້ຕາງໜ້າຜູ້ອອກແຮງງານ ກ່ຽວກັບການສ້າງ, ການຈັດຕັ້ງປະຕິບັດ ແລະ ທົບທວນຄືນ ເປັນໄລຍະກ່ຽວກັບນິຕິກຳ, ຍຸດທະສາດ ແລະ ແຜນງານແຫ່ງຊາດ ເພື່ອປ້ອງກັນການໄດ້ຮັບບາດເຈັບ, ການເກີດພະຍາດອາຊີບ ແລະ ການເສຍຊີວິດ ຈາກການເຮັດວຽກ.

ລັດ ເອົາໃຈໃສ່ສົ່ງເສີມຫົວໜ່ວຍແຮງງານທຸກຂະໜາດ, ແຮງງານນອກລະບົບ ແລະ ແຮງງານໃນຄົວເຮືອນ ໃຫ້ໄດ້ຮັບການພັດທະນາ ແລະ ເຂົ້າເຖິງການບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອບໍ່ໃຫ້ເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.

ລັດ ຊຸກຍູ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນລົງທຶນ ເຂົ້າໃນການພັດທະນາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ມີຄວາມເຂັ້ມແຂງ.

ມາດຕາ 5 ຫຼັກການກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ

ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບແນວທາງ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ຮັບປະກັນສິດທິຂັ້ນພື້ນຖານຂອງຜູ້ອອກແຮງງານ ໃນການເຮັດວຽກທີ່ມີຄວາມປອດໄພ ແລະ ມີສຸຂະພາບແຮງງານທີ່ດີ;
3. ຮັບປະກັນມາດຕະການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ໂດຍອີງໃສ່ການປະເມີນຄວາມສ່ຽງ, ຄວາມໂປ່ງໃສ, ຍຸຕິທຳ, ສະເໝີພາບ ແລະ ທັນເຫດການ, ໄດ້ຈັດຕັ້ງປະຕິບັດ, ບູລິມະສິດມາດຕະການປ້ອງກັນ, ຄວບຄຸມບັນດາປັດໃຈ ທີ່ເປັນອັນຕະລາຍ ແລະ ສານພິດໃນເວລາເຮັດວຽກ;
4. ຮັບປະກັນການປຶກສາຫາລື ລະຫວ່າງສາມຝ່າຍ, ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານທຸກຂັ້ນ ໃນການປະຕິບັດກົດໝາຍ ແລະ ລະບຽບການ;
5. ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໃນການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ ຂອງທຸກຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ ທັງໃນລະບົບ ແລະ ນອກລະບົບ ຂອງທຸກພາກສ່ວນເສດຖະກິດ ຢູ່ໃນ ສປປ ລາວ.

ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການຍົກລະດັບຄວາມຮູ້ຄວາມສາມາດ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ເພື່ອພັດທະນາ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ

### ໝວດທີ 1
### ສິດ ແລະ ຄວາມຮັບຜິດຊອບຂອງຜູ້ອອກແຮງງານ

ມາດຕາ 8 ສິດ ຂອງຜູ້ອອກແຮງງານ

ໃນວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຜູ້ອອກແຮງງານ ມີສິດ ດັ່ງນີ້:

1. ຮຽກຮ້ອງໃຫ້ຜູ້ໃຊ້ແຮງງານ ສ້າງເງື່ອນໄຂ ແລະ ສະພາບແວດລ້ອມ ໃນການເຮັດວຽກ ທີ່ຮັບປະກັນດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ໄດ້ຮັບຂໍ້ມູນ ຂ່າວສານ, ຄວາມຮູ້ ແລະ ມາດຕະການປ້ອງກັນ ກ່ຽວກັບປັດໃຈທີ່ເປັນອັນຕະລາຍ ແລະ ເປັນພິດ;
3. ຮຽກຮ້ອງໃຫ້ຜູ້ໃຊ້ແຮງງານສັບຊ້ອນວຽກ ທີ່ເໝາະສົມໃຫ້ຕົນ ຫຼັງຈາກທີ່ໄດ້ຮັບການປິ່ນປົວ ຍ້ອນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ;
4. ປະຕິເສດການເຮັດວຽກ ທີ່ມີຄວາມສ່ຽງສູງ ແລະ ເປັນອັນຕະລາຍຮ້າຍແຮງຕໍ່ຊີວິດ ຫຼື ສຸຂະພາບຂອງຕົນ;
5. ຮ້ອງຮຽນ ຫຼື ລາຍງານໂດຍກົງ ຕໍ່ອົງການຄຸ້ມຄອງແຮງງານ ໃນກໍລະນີຜູ້ໃຊ້ແຮງງານ ບໍ່ປັບປຸງສະຖານທີ່ເຮັດວຽກຕາມການຮຽກຮ້ອງຂອງຕົນ ຫຼື ບໍ່ປະຕິບັດຕາມກົດໝາຍ ວ່າດ້ວຍແຮງງານ ແລະ ດຳລັດສະບັບນີ້.

ມາດຕາ 9 ຄວາມຮັບຜິດຊອບ ຂອງຜູ້ອອກແຮງງານ

ຜູ້ອອກແຮງງານຕ້ອງໃຫ້ຄວາມເຄົາລົບບັນດາຫຼັກການ, ນິຕິກຳຕ່າງໆ ແລະ ເຂົ້າຮ່ວມທຸກກິດຈະກຳ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢ່າງເຂັ້ມງວດ.

### ໝວດທີ 2
### ສິດ ແລະ ຄວາມຮັບຜິດຊອບ ຂອງຜູ້ໃຊ້ແຮງງານ

ມາດຕາ 10 ສິດ ຂອງຜູ້ໃຊ້ແຮງງານ

ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຜູ້ໃຊ້ແຮງງານ ມີສິດ ດັ່ງນີ້:

1. ຮຽກຮ້ອງໃຫ້ຜູ້ອອກແຮງງານປະຕິບັດລະບຽບ, ຂັ້ນຕອນ ແລະ ມາດຕະການ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ຍ້ອງຍໍ, ໃຫ້ລາງວັນແກ່ຜູ້ອອກແຮງງານ, ໜ່ວຍງານທີ່ມີຜົນສຳເລັດ ໃນການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
3. ຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ພັດທະນາ, ວາງມາດຕະການ ແລະ ບັງຄັບໃຊ້ ເພື່ອຮັບປະກັນດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ສຳລັບຜູ້ອອກແຮງງານ; ຈ່າຍຄ່າປະກັນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ໃຫ້ຜູ້ອອກແຮງງານ;
4. ຝຶກອົບຮົມ ແລະ ໃຫ້ຄຳແນະນຳດ້ານນິຕິກຳ, ກົດລະບຽບ, ຂັ້ນຕອນ ແລະ ມາດຕະການປ້ອງກັນຄວາມປອດໄພ ໃຫ້ແກ່ຜູ້ອອກແຮງງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ບັນຈຸສັບຊ້ອນ ແລະ ຍົກຍ້າຍຜູ້ອອກແຮງານ ໄດ້ເຮັດວຽກຕາມຄວາມເໝາະສົມ ກັບຄວາມສາມາດ ແລະ ຄຸນລັກສະນະຂອງຜູ້ອອກແຮງງານ ເພື່ອບໍ່ໃຫ້ມີຜົນກະທົບ ທີ່ບໍ່ດີຕໍ່ສຸຂະພາບຂອງຜູ້ອອກແຮງງານ;
6. ຈ້າງບຸກຄົນ ຫຼື ນິຕິບຸກຄົນຈາກພາຍນອກ ເພື່ອເຂົ້າມາປະເມີນ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ມາດຕະການກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນຫົວໜ່ວຍແຮງງານຂອງຕົນ;

7. ລະດົມໃຫ້ຜູ້ອອກແຮງງານ ເຂົ້າຮ່ວມຂະບວນການປ້ອງກັນຄວາມສ່ຽງ, ຕອບໂຕ້ໃນກໍລະນີສຸກເສີນ, ການນໍາໃຊ້ອຸປະກອນປ້ອງກັນສ່ວນບຸກຄົນ ແລະ ວິທີການປະຖົມພະຍາບານຂັ້ນຕົ້ນ.

**ມາດຕາ 11 ຄວາມຮັບຜິດຊອບຂອງຜູ້ໃຊ້ແຮງງານ**

ຜູ້ໃຊ້ແຮງງານຕ້ອງສ້າງ, ຈັດຕັ້ງປະຕິບັດ ແລະ ຕິດຕາມບັນດາກິດຈະກໍາຕ່າງໆ ເພື່ອຮັບປະກັນໃຫ້ໄດ້ ມາດຕະຖານຂອງແຜນງານດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ ແລະ ຍົກລະດັບໃຫ້ສູງຂຶ້ນ ເພື່ອໃຫ້ກາຍເປັນວັດທະນະທໍາທົ່ວລະກ້າວ.

## ໝວດທີ 3
## ຄວາມຮັບຜິດຊອບຂອງພະນັກງານ ແລະ ໜ່ວຍງານ ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ

**ມາດຕາ 12 ຄວາມຮັບຜິດຊອບພະນັກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ**

ພະນັກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ ເປັນຜູ້ຊ່ວຍຜູ້ໃຊ້ແຮງງານ ໃນການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ສະຖານທີ່ເຮັດວຽກ ຂອງຫົວໜ່ວຍແຮງງານ ແລະ ມີຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:

1. ສ້າງຮ່າງກົດລະບຽບກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ພາຍໃນຫົວໜ່ວຍແຮງງານ ແລະ ຊຸກຍູ້ໃຫ້ຈັດຕັ້ງປະຕິບັດ;
2. ກວດກາສະຖານທີ່ເຮັດວຽກ, ວິເຄາະຄວາມເປັນອັນຕະລາຍຂອງໜ້າວຽກ, ປະເມີນຄວາມສ່ຽງ ແລະ ກໍານົດມາດຕະການປ້ອງກັນ;
3. ສືບສວນຫາສາເຫດ ທີ່ພາໃຫ້ເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ເພື່ອວາງມາດຕະການຄວບຄຸມບັນດາປັດໃຈ ທີ່ເປັນອັນຕະລາຍ ແລະ ມີຄວາມສ່ຽງ ໃນສະຖານທີ່ເຮັດວຽກ;
4. ບັນທຶກ, ສັງລວມ ຂໍ້ມູນກ່ຽວກັບການໄດ້ຮັບບາດເຈັບ ແລະ ພະຍາດອາຊີບ ແລ້ວລາຍງານໃຫ້ຫົວໜ່ວຍແຮງງານຂອງຕົນ ແລະ ອົງການຄຸ້ມຄອງແຮງງານ ທີ່ກ່ຽວຂ້ອງ;
5. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
6. ແນະນໍາ, ໃຫ້ຄວາມຮູ້ ແລະ ຝຶກອົບຮົມໃຫ້ພະນັກງານ ຢູ່ໃນຫົວໜ່ວຍແຮງງານຂອງຕົນ;
7. ຮ່ວມມືກັບເຈົ້າໜ້າທີ່ກວດກາດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຂອງອົງການຄຸ້ມຄອງແຮງງານ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;
8. ມີຄວາມຮັບຊອບອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ຄວາມຮັບຜິດຊອບໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານ**

ໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ສະຖານທີ່ເຮັດວຽກ ມີຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:

1. ວາງແຜນ ແລະ ປະຕິບັດແຜນການ, ໂຄງການວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອປ້ອງກັນການໄດ້ຮັບບາດເຈັບ ແລະ ພະຍາດອາຊີບ ຢູ່ໃນສະຖານທີ່ເຮັດວຽກ;
2. ດໍາເນີນການກວດກາເປັນປົກກະຕິ ຢູ່ໃນສະຖານທີ່ເຮັດວຽກ, ໃຫ້ຄໍາແນະນໍາຜູ້ໃຊ້ແຮງງານ ປະຕິບັດຕາມລະບຽບ ແລະ ມາດຕະຖານຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ;
3. ແນະນໍາການນໍາໃຊ້ເຄື່ອງມື ແລະ ອຸປະກອນດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ ຕາມຄວາມຈໍາເປັນ;
4. ສ້າງລະບົບການລາຍງານສະພາບການເຮັດວຽກ ທີ່ບໍ່ມີຄວາມປອດໄພ ແລະ ບໍ່ດີຕໍ່ສຸຂະພາບ ເພື່ອສົ່ງເສີມສະພາບການເຮັດວຽກໃຫ້ມີຄວາມປອດໄພ ແລະ ມີຜົນດີຕໍ່ສຸຂະພາບ ໃນທຸກລະດັບ;
5. ລາຍງານການໄດ້ຮັບບາດເຈັບ ແລະ ພະຍາດອາຊີບ ໃຫ້ຫົວໜ່ວຍແຮງງານ ແລະ ອົງການຄຸ້ມຄອງແຮງງານ ເພື່ອເກັບກໍາຂໍ້ມູນ, ປັບປຸງ ແລະ ຫາວິທີແກ້ໄຂ ເປັນແຕ່ລະໄລຍະ;

6. ປຶກສາຫາລືກັບຜູ້ໃຊ້ແຮງງານ ເພື່ອຫາວິທີແກ້ໄຂສະພາບການເຮັດວຽກ ທີ່ບໍ່ມີຄວາມປອດໄພ ແລະ ມີຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ;
7. ສ້າງແຜນຝຶກອົບຮົມ, ຈັດຝຶກອົບຮົມ ແລະ ກິດຈະກໍາ ທີ່ກ່ຽວຂ້ອງກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
8. ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ແລ້ວລາຍງານໃຫ້ຜູ້ໃຊ້ແຮງງານ;
9. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ຂອງອົງການຄຸ້ມຄອງແຮງງານ ແລະ ອົງການທີ່ກ່ຽວຂ້ອງ.

ໃນກໍລະນີໄດ້ຮັບແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບຕ່າງໆ ທີ່ກ່ຽວຂ້ອງກັບຄວາມປອດໄພ ແລະ ສຸຂະພາບແຮງງານ ຈາກອົງການຄຸ້ມຄອງແຮງງານຄວາມປອດໄພ ແລະ ສຸຂະພາບແຮງງານ ໜ່ວຍງານດັ່ງກ່າວຕ້ອງເຜີຍແຜ່ໃຫ້ຜູ້ອອກແຮງງານຮັບຊາບ ພ້ອມທັງຈັດຕັ້ງປະຕິບັດ ແລະ ຕິດປະກາດໄວ້ ບ່ອນທີ່ເຫັນໄດ້ງ່າຍ ໃນສະຖານທີ່ເຮັດວຽກ ເປັນເວລາຢ່າງໜ້ອຍ ສິບຫ້າວັນ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ.

ໃນກໍລະນີ ມີຄະນະກໍາມະການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຕາມທີ່ກໍານົດໄວ້ໃນມາດຕາ 123 ຂອງກົດໝາຍວ່າດ້ວຍແຮງງານ, ຄະນະກໍາມະການດັ່ງກ່າວ ມີຄວາມຮັບຜິດຊອບ ຄືກັນກັບຄວາມຮັບຜິດຊອບຂອງໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານ ຕາມທີ່ໄດ້ກໍານົດໄວ້ໃນມາດຕານີ້

## ໝວດທີ 4
## ການປ້ອງກັນ ແລະ ຄວບຄຸມປັດໃຈທີ່ເປັນອັນຕະລາຍ

### ມາດຕາ 14 ການສະໜອງຂໍ້ມູນຂ່າວສານ

ຜູ້ໃຊ້ແຮງງານ ຕ້ອງສະໜອງຂໍ້ມູນຂ່າວສານ ແລະ ແນະນໍາໃຫ້ຜູ້ອອກແຮງງານຮັບຮູ້ ກ່ຽວກັບສິ່ງທີ່ເປັນອັນຕະລາຍ ຢູ່ໃນສະຖານທີ່ເຮັດວຽກ, ການນໍາໃຊ້ເຄື່ອງມື, ອຸປະກອນ ແລະ ວັດສະດຸ ເຂົ້າໃນການເຮັດວຽກໃຫ້ ແທດເໝາະກັບໜ້າວຽກທີ່ຕົນຮັບຜິດຊອບ ໃຫ້ຖືກຕ້ອງກັບຄໍາແນະນໍາ ແລະ ຄູ່ມືກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ.

ຜູ້ຜະລິດ, ຜູ້ນໍາເຂົ້າ, ຜູ້ສະໜອງ ແລະ ຜູ້ຕິດຕັ້ງເຄື່ອງຈັກ, ອຸປະກອນ ຫຼື ວັດສະດຸ ຕ້ອງມີຄໍາແນະນໍາ ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນພາສາລາວ, ພາສາຕ່າງປະເທດ ສໍາລັບຜູ້ອອກແຮງງານຕ່າງປະເທດ ທີ່ເຮັດວຽກນໍາຕົນ.

ຫົວໜ່ວຍແຮງງານ, ສະຖານທີ່ເຮັດວຽກ, ອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບເຜີຍແຜ່ຂໍ້ມູນຂ່າວສານ, ປຸກຈິດສໍານຶກໃຫ້ຜູ້ອອກແຮງງານ ຮູ້ຈັກປ້ອງກັນ, ຫຼີກລ່ຽງສິ່ງທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຕົນເອງ ແລະ ຜູ້ທີ່ຢູ່ອ້ອມຂ້າງ.

### ມາດຕາ 15 ການຝຶກອົບຮົມ

ຜູ້ໃຊ້ແຮງງານ ຕ້ອງສ້າງເງື່ອນໄຂໃຫ້ຜູ້ອອກແຮງງານທຸກຄົນ ໄດ້ຮັບການຝຶກອົບຮົມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນການເຮັດວຽກ.

ໃນກໍລະນີ ມີການຮັບເອົາຜູ້ອອກແຮງງານເຂົ້າເຮັດວຽກໃໝ່, ປ່ຽນວຽກ, ປ່ຽນສະຖານທີ່ເຮັດວຽກ ຫຼື ປ່ຽນແປງເຄື່ອງຈັກ ຫຼື ອຸປະກອນ ຜູ້ໃຊ້ແຮງງານ ຕ້ອງຝຶກອົບຮົມໃຫ້ຜູ້ອອກແຮງງານທຸກຄົນ ກ່ອນການເລີ່ມ ເຮັດວຽກ.

### ມາດຕາ 16 ພັນທະຜູ້ຮັບເໝົາຫຼັກ ແລະ ຜູ້ຮັບເໝົາຍ່ອຍ

ຜູ້ຮັບເໝົາຫຼັກ ແລະ ຜູ້ຮັບເໝົາຍ່ອຍ ຂອງຫົວໜ່ວຍແຮງງານໃດໜຶ່ງ ຕ້ອງດໍາເນີນວຽກງານດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນມາດຕະຖານດຽວກັນ.

ຜູ້ຮັບເໝົາຫຼັກ ທີ່ຈ້າງຜູ້ຮັບເໝົາຍ່ອຍ ແລະ ມີຜູ້ອອກແຮງງານລວມທັງໝົດ ໃນສະຖານທີ່ເຮັດວຽກເກີນໜຶ່ງຮ້ອຍຄົນ ຕ້ອງແຕ່ງຕັ້ງຄະນະກໍາມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ ທີ່ມາຈາກຜູ້ຮັບເໝົາຍ່ອຍ ເພື່ອຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ.

ຜູ້ຮັບເໝົາຍ່ອຍ ຕ້ອງເກັບກຳ ແລະ ລາຍງານໃຫ້ຜູ້ຮັບເໝົາຫຼັກ ກ່ຽວກັບຂໍ້ມູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ແລະ ຜູ້ຮັບເໝົາຫຼັກ ຕ້ອງລາຍງານໃຫ້ອົງການຄຸ້ມຄອງແຮງງານຊາບ ໃນແຕ່ລະໄລຍະ.

### ມາດຕາ 17 ມາດຕະການນຳໃຊ້ອຸປະກອນປ້ອງກັນສ່ວນບຸກຄົນ

ຜູ້ໃຊ້ແຮງງານ ຕ້ອງສະໜອງອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ທີ່ເໝາະສົມ ແລະ ໄດ້ມາດຕະຖານ ໃຫ້ຜູ້ອອກແຮງງານ ຢ່າງຄົບຖ້ວນ ໂດຍບໍ່ໃຫ້ຜູ້ອອກແຮງງານ ຈ່າຍຄ່າອຸປະກອນເຫຼົ່ານັ້ນ ພ້ອມທັງມີມາດຕະການໃຫ້ຜູ້ອອກແຮງງານ ສວມໃສ່ອຸປະກອນດັ່ງກ່າວ ທີ່ສອດຄ່ອງກັບເງື່ອນໄຂ ຂອງແຕ່ລະໜ້າວຽກ.

ຜູ້ອອກແຮງງານ ຕ້ອງສວມໃສ່ອຸປະກອນປ້ອງກັນຄວາມປອດໄພສ່ວນບຸກຄົນ ທີ່ຜູ້ໃຊ້ແຮງງານສະໜອງ ໃຫ້ພ້ອມທັງຮັບຜິດຊອບ ໃນການຮັກສາ, ສ້ອມແປງຕາມຄວາມສາມາດຕົວຈິງ ເພື່ອໃຫ້ສາມາດໃຊ້ງານໄດ້ຕາມອາຍຸການນຳໃຊ້ຕົວຈິງ.

ໃນກໍລະນີທີ່ຜູ້ອອກແຮງງານ ບໍ່ສວມໃສ່ອຸປະກອນປ້ອງກັນສ່ວນບຸກຄົນ ຜູ້ໃຊ້ແຮງງານ ຫຼື ພະນັກງານຮັບຜິດຊອບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ ສາມາດນຳໃຊ້ມາດຕະການທາງວິໄນ ຕາມທີ່ໄດ້ກຳນົດ ໄວ້ໃນກົດລະບຽບພາຍໃນ ຂອງຫົວໜ່ວຍແຮງງານ.

### ມາດຕາ 18 ການຕິດສັນຍາລັກ, ເຄື່ອງໝາຍ ແລະ ປ້າຍເຕືອນໄພອັນຕະລາຍ

ຜູ້ໃຊ້ແຮງງານ ຕ້ອງຕິດຕັ້ງສັນຍາລັກ, ເຄື່ອງໝາຍ ແລະ ປ້າຍເຕືອນໄພອັນຕະລາຍ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ແຜນວາດທາງໜີໄພສຸກເສີນ ໃນສະຖານທີ່ເຮັດວຽກ. ປ້າຍເຕືອນໄພອັນຕະລາຍ ຕ້ອງເປັນພາສາລາວ ແລະ ພາສາຕ່າງປະເທດ ທີ່ຜູ້ອອກແຮງງານຕ່າງປະເທດ ເຂົ້າໃຈໄດ້.

ຂໍ້ແນະນຳກ່ຽວກັບຄວາມປອດໄພ ແລະ ຄວາມເປັນອັນຕະລາຍຂອງວັດສະດຸ ຫຼື ສານເຄມີ ຕ້ອງຕິດໄວ້ບ່ອນທີ່ຜູ້ອອກແຮງງານສາມາດເບິ່ງເຫັນໄດ້ງ່າຍ.

### ມາດຕາ 19 ວັດທະນະທຳຄວາມປອດໄພ ແລະ ສຸຂະພາບແຮງງານ

ວັດທະນະທຳຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນວັດທະນາທຳໃນການເຄົາລົບ ແລະ ປະຕິບັດກົດໝາຍ, ລະບຽບການ ແລະ ຄຳແນະນຳຕ່າງໆ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ ຊຶ່ງກາຍເປັນຄວາມຄວາມເຄີຍຊິນ, ແລະ ເປັນກິດຈະກຳປະຈຳວັນ ຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ.

ລັດຖະບານ, ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ຕ້ອງມີສ່ວນຮ່ວມ ແລະ ເຂົ້າຮ່ວມໃນການສ້າງວັດທະນາທຳດັ່ງກ່າວ ເພື່ອຮັບປະກັນໃຫ້ຜູ້ອອກແຮງງານ ໄດ້ເຮັດວຽກຢ່າງມີຄວາມປອດໄພ ແລະ ມີສຸຂະພາບດີ.

## ໝວດທີ 5
## ການປ້ອງກັນ ແລະ ຊ່ວຍເຫລືອຜູ້ເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ

### ມາດຕາ 20 ອຸປະຕິເຫດແຮງງານ ແລະ ພະຍາດອາຊີບ

ອຸປະຕິເຫດແຮງງານ ແມ່ນອຸປະຕິເຫດທີ່ເກີດຂຶ້ນກັບຜູ້ອອກແຮງງານ ໃນເວລາເຮັດວຽກຢູ່ໃນ ແລະ ຢູ່ນອກສະຖານທີ່ເຮັດວຽກ ແລະ ໃນສະຖານທີ່ພັກຜ່ອນຊົ່ວຄາວ ຂອງເວລາເຮັດວຽກ ຂອງຜູ້ໃຊ້ແຮງງານ ຫຼື ໃນເວລາເດີນທາງໄປມາເຮັດວຽກ.

ອຸປະຕິເຫດແຮງງານທີ່ຮ້າຍແຮງ ແມ່ນອຸປະຕິເຫດແຮງງານທີ່ເກີດຂຶ້ນ ອັນພາໃຫ້ມີການເສຍຊີວິດ ຫຼື ໄດ້ຮັບບາດເຈັບ ໃນຂັ້ນສາຫັດ ຫຼື ມີຄວາມເສຍຫາຍທາງດ້ານວັດຖຸ ແລະ ຊັບສິນເປັນຈຳນວນຫຼວງຫຼາຍ.

ພະຍາດອາຊີບ ແມ່ນພະຍາດທີ່ເກີດຂຶ້ນຈາກການອອກແຮງງານ. ບັນຊີລາຍຊື່ຂອງພະຍາດອາຊີບ ໄດ້ກຳນົດໄວ້ໃນເອກະສານຄັດຕິດດຳລັດສະບັບນີ້.

ມາດຕາ 21 ການປ້ອງກັນອຸປະຕິເຫດແຮງງານ

ການປ້ອງກັນອຸປະຕິເຫດແຮງງານ ແມ່ນການສ້າງລະບົບການເຮັດວຽກ ທີ່ມີຄວາມປອດໄພ ຢູ່ໃນຫົວໜ່ວຍແຮງງານ ແລະ ສະຖານທີ່ເຮັດວຽກ ຊຶ່ງລວມມີ ການສ້າງລະບຽບການ ແລະ ມາດຕະຖານ, ການວິເຄາະ, ການວິໄຈ, ການສຶກສາຄົ້ນຄວ້າ, ການຝຶກອົບຮົມ, ການກວດກາ ແລະ ອື່ນໆ.

ມາດຕາ 22 ການປ້ອງກັນພະຍາດອາຊີບ

ການປ້ອງກັນພະຍາດອາຊີບ ແມ່ນການສ້າງສະພາບແວດລ້ອມ ໃນສະຖານທີ່ເຮັດວຽກ ໃຫ້ມີຄວາມສະອາດ, ຖືກສຸຂະອະນາໄມ ແລະ ການສ້າງສິ່ງອຳນວຍຄວາມສະດວກຕ່າງໆ ໃນການເຮັດວຽກ ເພື່ອບໍ່ໃຫ້ພະຍາດ ຫຼື ການເຈັບເປັນ ຍ້ອນການເຮັດວຽກ ລວມທັງການຮັບປະກັນ ໃຫ້ຜູ້ອອກແຮງງານ ໄດ້ຮັບການກວດສຸຂະພາບ ປະຈຳປີ ຕາມກົດໝາຍກຳນົດ.

ມາດຕາ 23 ການປະຖົມພະຍາບານ ແລະ ການຊ່ວຍເຫຼືອເບື້ອງຕົ້ນ

ການປະຖົມພະຍາບານ ແລະ ການຊ່ວຍເຫຼືອເບື້ອງຕົ້ນ ໃຫ້ປະຕິບັດ ດັ່ງນີ້:

1. ທຸກສະຖານທີ່ເຮັດວຽກ ຕ້ອງມີຕູ້ຢາປະຖົມພະຍາບານເບື້ອງຕົ້ນ, ມີຢາທີ່ຈຳເປັນ ແລະ ອຸປະກອນປະຖົມພະຍາບານ ໄວ້ຕະຫຼອດເວລາ;
2. ຜູ້ໄດ້ຮັບບາດເຈັບຈາກອຸປະຕິເຫດແຮງງານ ແລະ ຜູ້ເຈັບປ່ວຍ ຕ້ອງໄດ້ຮັບການປະຖົມພະຍາບານເບື້ອງຕົ້ນທີ່ຖືກຕ້ອງ ກ່ອນທີ່ຈະນຳສົ່ງຜູ້ກ່ຽວໄປສະຖານທີ່ບໍລິການສາທາລະນະສຸກ ທີ່ຢູ່ໃກ້ສຸດ;
3. ສຳລັບບ່ອນເຮັດວຽກ ທີ່ມີຄວາມສ່ຽງສູງ ຕໍ່ການເກີດອຸປະຕິເຫດແຮງງານ, ຜູ້ໃຊ້ແຮງງານ ຄວນກະກຽມຊ່ວຍເຫຼືອທາງເຕັກນິກ ແລະ ອຳນວຍຄວາມສະດວກທາງການແພດທີ່ເໝາະສົມ ເຊັ່ນ: ອຸປະກອນເຄື່ອນຍ້າຍຄົນເຈັບ, ເຄື່ອງຊ່ວຍຫາຍໃຈສຸກເສີນ ພ້ອມທັງມີວິທີການບໍລິການນຳສົ່ງຄົນເຈັບສຸກເສີນ;
4. ຂັ້ນຕອນໃນການຮັບມື ແລະ ຕອບໂຕ້ສຳລັບເຫດສຸກເສີນ ຕ້ອງມີການປັບປຸງ ແລະ ມີການຝຶກຊ້ອມໃຫ້ພະນັກງານທຸກຄົນ ໃນສະຖານທີ່ເຮັດວຽກ ໃນແຕ່ລະໄລຍະ;
5. ທີມງານການປະຖົມພະຍາບານ ແລະ ການຊ່ວຍເຫຼືອເບື້ອງຕົ້ນ ຫຼື ແພດແຮງງານ ຕ້ອງໄດ້ຮັບການຝຶກອົບຮົມທາງດ້ານທິດສະດີ, ການປະຕິບັດຕົວຈິງ ແລະ ການນຳໃຊ້ອຸປະກອນເປັນ ແຕ່ລະໄລຍະ ເພື່ອເປັນການກະກຽມໃນກໍລະນີເກີດເຫດສຸກເສີນ.

ມາດຕາ 24 ການກວດສຸຂະພາບຂອງຜູ້ອອກແຮງງານ

ຜູ້ໃຊ້ແຮງງານ ຕ້ອງໃຫ້ຜູ້ອອກແຮງງານລາວ ແລະ ຕ່າງປະເທດ ໄດ້ຮັບການກວດສຸຂະພາບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 126 ຂອງກົດໝາຍ ວ່າດ້ວຍແຮງງານ ເພື່ອປ້ອງກັນການເກີດພະຍາດ ຫຼື ການເຈັບປ່ວຍ ຈາກການເຮັດວຽກ ທີ່ຜູ້ອອກແຮງງານໄດ້ຮັບມອບໝາຍ ພ້ອມທັງເປັນການຊ່ວຍເຫລືອໃຫ້ທັນເວລາ. ກ່ອນຈະຮັບຜູ້ອອກແຮງງານເຂົ້າເຮັດວຽກໃໝ່ ແລະ ຜູ້ຍ້າຍມາຈາກບ່ອນເຮັດວຽກທີ່ເປັນອັນຕະລາຍ ຕ້ອງໄດ້ຮັບການກວດສຸຂະພາບ ແລະ ຜູ້ອອກແຮງງານ ຕ້ອງໃຫ້ຄວາມຮ່ວມມື.

ຄ່າໃຊ້ຈ່າຍໃນການກວດສຸຂະພາບ ຂອງຜູ້ອອກແຮງງານ ເປັນຄວາມຮັບຜິດຊອບ ຜູ້ໃຊ້ແຮງງານ.

ໃນການກວດສຸຂະພາບຂອງຜູ້ອອກແຮງງານ ຜູ້ໃຊ້ແຮງງານ ຕ້ອງເຮັດສັນຍາກັບສະຖານທີ່ກວດສຸຂະພາບສະເພາະດ້ານແຮງງານ ທີ່ໄດ້ຮັບການຮັບຮອງ ຫຼື ອະນຸຍາດຈາກຂະແໜງສາທາລະນະສຸກ ແລະ ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ບໍ່ອານຸຍາດໃຫ້ຜູ້ໃຊ້ແຮງງານຈ່າຍເງິນສົດ ໃຫ້ຜູ້ອອກແຮງງານໄປກວດສຸຂະພາບເອງ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບກະຊວງສາທາລະນະສຸກ ເປັນຜູ້ກຳນົດໄລຍະຫ່າງຂອງການກວດສຸຂະພາບຂອງຜູ້ອອກແຮງງານ ໂດຍອີງໃສ່ລະດັບຄວາມສ່ຽງ, ລະດັບຄວາມເປັນອັນຕະລາຍຂອງໜ້າວຽກ ແລະ ຜົນຂອງການກວດສຸຂະພາບຕົວຈິງ ແຕ່ຢ່າງໜ້ອຍ ຜູ້ອອກແຮງງານທຸກຄົນ ຕ້ອງໄດ້ຮັບກວດສຸຂະພາບໜຶ່ງຄັ້ງຕໍ່ປີ.

ຜົນຂອງການກວດສຸຂະພາບ ຈະບໍ່ນຳໃຊ້ເພື່ອການຈຳແນກ ຫຼື ຈຸດປະສົງອື່ນ ທີ່ຈະມີຜົນທາງລົບຕໍ່ຜູ້ອອກແຮງງານ.

ມາດຕາ 25 ການບັນທຶກຜົນຂອງ ການກວດສຸຂະພາບຂອງຜູ້ອອກແຮງງານ

ໂດຍອີງໃສ່ສະພາບຕົວຈິງ ໃນແຕ່ລະໄລຍະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສົມທົບກັບກະຊວງສະທາລະນະສຸກ ກໍານົດ ແລະ ສະໜອງລາຍການກວດສຸຂະພາບ ໃຫ້ແກ່ສະຖານທີ່ກວດສຸຂະພາບແຮງງານ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງສາທາລະນະສຸກ ມີສິດບັນທຶກຂໍ້ມູນການກວດສຸຂະພາບຂອງຜູ້ອອກແຮງງານທຸກຄົນ ເພື່ອນໍາໃຊ້ເຂົ້າໃນວຽກງານທາງການແພດ ແລະ ການປະກັນສັງຄົມ ລວມທັງການຕິດຕາມ, ປິ່ນປົວ ແລະ ອຸດໜູນຕາມລະບຽບການ.

ຜູ້ອອກແຮງງານ ມີສິດຮັບຮູ້ຜົນຂອງການກວດສຸຂະພາບຂອງຕົນໃນແຕ່ລະຄັ້ງ.

ມາດຕາ 26 ການບັນທຶກ ແລະ ລາຍງານອຸປະຕິເຫດແຮງງານ ແລະ ພະຍາດອາຊີບ

ຜູ້ໃຊ້ແຮງງານ ຕ້ອງຊອກຫາ ແລະ ບັນທຶກສາເຫດ ຂອງການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ. ປຶ້ມບັນທຶກສາເຫດ ຂອງການເກີດອຸປະຕິເຫດແຮງງານ ຕ້ອງເກັບຮັກສາໄວ້ຢ່າງໜ້ອຍ 5 ປີ ແລະ ຢ່າງໜ້ອຍ 20 ປີ ສໍາລັບພະຍາດອາຊີບ.

ຜູ້ໃຊ້ແຮງງານ ຕ້ອງລາຍງານຈໍານວນຜູ້ໄດ້ຮັບເຄາະຮ້າຍ ຈາກອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ໃຫ້ອົງການຄຸ້ມຄອງແຮງງານ ໃນທຸກສາມເດືອນ, ຫົກເດືອນ ແລະ ໜຶ່ງປີ.

ໃນກໍລະນີ ມີການເກີດອຸປະຕິເຫດແຮງງານທີ່ຮ້າຍແຮງ ຢູ່ໃນສະຖານທີ່ເຮັດວຽກ ຫຼື ມີຜູ້ອອກແຮງງານຈໍານວນຫຼາຍ ປະສົບອັນຕະລາຍ ຈາກການເຮັດວຽກ ຜູ້ໃຊ້ແຮງງານ ຕ້ອງປະຕິບັດ ດັ່ງນີ້:

1. ຖ້າມີການເສຍຊີວິດ, ບາດເຈັບສາຫັດ ຫຼື ສະຖານທີ່ເຮັດວຽກ ໄດ້ຮັບຄວາມເສຍຫາຍ ຊຶ່ງຈໍາເປັນຕ້ອງໄດ້ຢຸດການຜະລິດ ຜູ້ໃຊ້ແຮງງານ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງແຮງງານຊາບທັນທີ ແລະ ລາຍງານເປັນລາຍລັກອັກສອນ ກ່ຽວກັບສາເຫດທີ່ເກີດຂຶ້ນ ລວມທັງຄວາມເສຍຫາຍ, ການແກ້ໄຂ ແລະ ວິທີການປ້ອງກັນ ພາຍໃນສີ່ສິບແປດ ຊົ່ວໂມງ;
2. ຜູ້ໃຊ້ແຮງງານ ຕ້ອງແຈ້ງໃຫ້ອົງການປະກັນສັງຄົມ ກ່ຽວກັບຈໍານວນຜູ້ອອກແຮງງານທີ່ໄດ້ຮັບບາດເຈັບ ແລະ ເສຍຊີວິດ ຈາກການເກີດອຸປະຕິເຫດແຮງງານ ພາຍໃນເຈັດວັນ ເພື່ອຮັບການອຸດໜູນຕາມກົດໝາຍວ່າດ້ວຍການປະກັນສັງຄົມ ພ້ອມທັງລາຍງານໃຫ້ອົງການຄຸ້ມຄອງແຮງງານ;
3. ຖ້າຫາກຜູ້ໃຊ້ແຮງງານບໍ່ລາຍງານຕາມຂໍ້ 1 ແລະ 2 ເທິງນີ້ ຜູ້ອອກແຮງງານ ຫຼື ຜູ້ຕາງໜ້າຜູ້ອອກແຮງງານ ຫຼື ໜ່ວຍກໍາມະບານ ຫຼື ສະມາຊິກຄອບຄົວຂອງຜູ້ທີ່ໄດ້ຮັບເຄາະຮ້າຍ ກໍມີສິດລາຍງານ.

ມາດຕາ 27 ຄວາມຮັບຜິດຊອບຄ່າໃຊ້ຈ່າຍໃຫ້ຜູ້ເຄາະຮ້າຍ

ຜູ້ໃຊ້ແຮງງານ ຫຼື ອົງການປະກັນສັງຄົມ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການປິ່ນປົວ, ເງິນອຸດໜູນ, ເງິນ ຊົດເຊີຍ ໃຫ້ແກ່ຜູ້ອອກແຮງງານທຸກຄົນ ທີ່ໄດ້ຮັບເຄາະຮ້າຍ ຈາກອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ລວມທັງຜູ້ອອກແຮງງານ ທີ່ຍັງຢູ່ໃນໄລຍະການທົດລອງວຽກ, ຝຶກງານເພື່ອເຂົ້າເຮັດວຽກ ຕາມກົດໝາຍ ວ່າດ້ວຍແຮງງານ ແລະ ກົດໝາຍ ວ່າດ້ວຍການປະກັນສັງຄົມ.

ການໄດ້ຮັບເຄາະຮ້າຍ ເຖິງຂັ້ນເສຍຊີວິດ ຈາກການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ຜູ້ໃຊ້ແຮງງານ ຕ້ອງຈ່າຍເງິນອຸດໜູນໃຫ້ຄອບຄົວຂອງຜູ້ເສຍຊີວິດຕື່ມອີກ ຖ້າກວດພົບວ່າຍ້ອນສະພາບແວດລ້ອມບໍ່ດີ ຫລື ບໍ່ມີການປ້ອງກັນທີ່ເໝາະສົມ, ອຸປະກອນປ້ອງກັນສ່ວນບຸກຄົນ ບໍ່ໄດ້ມາດຕະຖານ ຜູ້ໃຊ້ແຮງງານຕ້ອງຈ່າຍ ເທົ່າກັບເງິນເດືອນ ຫຼື ຄ່າແຮງງານ ສິບຫ້າເດືອນ ຂອງຜູ້ກ່ຽວ.

ມາດຕາ 28 ຜູ້ຊ່ຽວຊານສະເພາະດ້ານ

ຫົວໜ່ວຍແຮງງານໃດ ທີ່ມີຜູ້ອອກແຮງງານແຕ່ 101 ຫາ 1.000 ຄົນ ຕ້ອງໃຫ້ມີຜູ້ຊ່ຽວຊານສະເພາະດ້ານ ເປັນຕົ້ນ ແພດແຮງງານ, ພະຍາບານ, ນັກອານາໄມ ແລະ ວິສະວະກອນ ຊຶ່ງອາດເຮັດວຽກປະຈໍາ ຫຼື ບໍ່ປະຈໍາ ກໍ່ໄດ້.

ສໍາລັບຫົວໜ່ວຍແຮງງານ ທີ່ມີຜູ້ອອກແຮງງານຫຼາຍກວ່າ 1.000 ຄົນ ຕ້ອງມີຜູ້ຊ່ຽວຊານສະເພາະດ້ານປະຈໍາ ຢູ່ໃນສະຖານທີ່ເຮັດວຽກ.

## ໝວດທີ 6
## ຄວາມຮັບຜິດຊອບຕໍ່ຜູ້ອອກແຮງງານນອກລະບົບ, ຫົວໜ່ວຍແຮງງານ ຂະໜາດນ້ອຍ, ຄົວເຮືອນ ແລະ ແຮງງານເຄື່ອນຍ້າຍລະຫວ່າງປະເທດ

**ມາດຕາ 29 ຄວາມຮັບຜິດຊອບຕໍ່ຜູ້ອອກແຮງງານນອກລະບົບ**

ອົງການຄຸ້ມຄອງແຮງງານ ມີຄວາມຮັບຜິດຊອບ ໃຫ້ຄຳປຶກສາ, ໃຫ້ຄຳແນະນຳກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ຕໍ່ຜູ້ອອກແຮງງານ ທີ່ເຮັດວຽກຢູ່ນອກຫົວໜ່ວຍແຮງງານ ລວມທັງຜູ້ເຮັດວຽກອິດສະຫຼະ ເປັນຕົ້ນ ການສ້າງແຜນການປ້ອງກັນ, ການປະເມີນຄວາມສ່ຽງ ແລະ ການລາຍງານຂໍ້ມູນຂ່າວສານ ກ່ຽວກັບອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.

**ມາດຕາ 30 ຄວາມຮັບຜິດຊອບຕໍ່ຫົວໜ່ວຍແຮງງານຂະໜາດນ້ອຍ**

ອົງການຄຸ້ມຄອງແຮງງານ ຊຸກຍູ້ ແລະ ຊ່ວຍເຫຼືອ ຫົວໜ່ວຍງານແຮງງານ ທີ່ມີຜູ້ອອກແຮງງານໜ້ອຍກວ່າສິບ ຄົນ ຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ.

**ມາດຕາ 31 ຄວາມຮັບຜິດຊອບຕໍ່ຄົວເຮືອນ**

ອົງການຄຸ້ມຄອງແຮງງານ ຊຸກຍູ້ຂອງຄົວເຮືອນ ທີ່ນຳໃຊ້ຜູ້ອອກແຮງງານເຮັດສັນຍາແຮງງານ ຮ່ວມກັບຜູ້ອອກ ແຮງງານ. ໃນກໍລະນີ ເກີດອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ເຈົ້າຂອງຄົວເຮືອນ ຕ້ອງໄດ້ຮັບຜິດຊອບ ເບິ່ງແຍງດູ ແລ ແລະ ຄ່າໃຊ້ຈ່າຍຕາມສັນຍາ ທີ່ໄດ້ເຊັນກັນ ແລະ ກົດໝາຍ.

**ມາດຕາ 32 ຄວາມຮັບຜິດຊອບ ຕໍ່ແຮງງານເຄື່ອນຍ້າຍລະຫວ່າງປະເທດ ສປປ ລາວ**

ຜູ້ອອກແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ຈະໄດ້ຮັບການປົກປ້ອງດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຄືກັນກັບຜູ້ອອກແຮງງານລາວ ແລະ ຕ້ອງໄດ້ຮັບການກວດສຸຂະພາບ ຈາກໜ່ວຍງານທີ່ ກ່ຽວຂ້ອງ ທີ່ຖືກຮັບຮອງຈາກຂະແໜງການສາທາລະນະສຸກ ກ່ອນຈະໄດ້ຮັບບັດອະນຸຍາດເຮັດວຽກຢູ່ ສປປ ລາວ.

ຜູ້ອອກແຮງງານລາວ ທີ່ຈະໄປເຮັດວຽກຢູ່ຕ່າງປະເທດ ຕ້ອງຮັບການຝຶກອົບຮົມຄວາມຮູ້ພື້ນຖານດ້ານຄວາມ ປອດໄພ ແລະ ສຸຂະພາບແຮງງານ ແລະ ໄດ້ຮັບການກວດສຸຂະພາບ ຕາມລະບຽບການຂອງ ສປປ ລາວ ແລະ ຂອງ ປະເທດທີ່ຮັບຜູ້ອອກແຮງງານ, ໄດ້ຮັບການກວດສຸຂະພາບຕາມລະບຽບການ ຂອງ ສປປ ລາວ ແລະ ຂອງປະເທດທີ່ ຮັບຜູ້ອອກແຮງງານ ພ້ອມທັງໄດ້ຮັບການປະກັນໄພ ສຳລັບອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ຢູ່ປະເທດນັ້ນ.

# ພາກທີ III
# ອົງການບໍລິການວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ

## ໝວດທີ 1
## ສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ

**ມາດຕາ 33 ສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ**

ສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ ຂຽນຫຍໍ້ດ້ວຍຕົວອັກສອນວ່າ “ສປຮຊ” ມີຊື່ເປັນ ພາສາອັງກິດ The National Occupational Safety and Health Center ຂຽນຫຍໍ້ດ້ວຍຕົວອັກສອນວ່າ “NOSHC” ຖືກແຕ່ງຕັ້ງໂດຍລັດຖະບານ ຕາມການສະເໜີຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ ມີພາລະບົດບາດເປັນໃຈກາງ ໃນການປະສານງານ ແລະ ຊ່ວຍວຽກໃຫ້ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ.

**ມາດຕາ 34 ພາລະບົດບາດຂອງສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ**

ສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ ມີພາລະບົດບາດ ເປັນເສນາທິການ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຄົ້ນຄ້ວາ, ສ້າງລະບຽບການ, ມາດຕະຖານ, ວິເຄາະ, ວິໄຈ, ສຶດສອນ, ຝຶກອົບຮົມ, ບໍລິການ, ຊຸກຍູ້ ແລະ ສົ່ງເສີມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ. ບົນພື້ນຖານແນວທາງ, ນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ເປັນສູນວິຊາການໜຶ່ງ ສັງກັດໃນໂຄງປະກອບກົງຈັກການ ຈັດຕັ້ງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫົວໜ້າຂອງສູນຄວາມປອດໄພ ແລະ ສຸຂະພາບແຮງງານ ມີຕໍາແໜ່ງເທົ່າກັບຮອງຫົວໜ້າກົມຂອງກະຊວງ ໂດຍໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງຈາກລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຕາມການຄົ້ນຄ້ວາ ແລະ ສະເໜີຂອງກົມຈັດຕັ້ງ-ພະນັກງານ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ**

ໃນການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ໂຄງການ, ແຜນປະຕິບັດງານ ຂອງສູນ;
3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ໂຄງການ, ແຜນປະຕິບັດງານ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ຊີ້ນໍາ, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
5. ສ້າງລະບົບຖານຂໍ້ມູນ ແລະ ເກັບກໍາສະຖິຕິກ່ຽວກັບອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
6. ສົ່ງເສີມ, ບໍາລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
7. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງພະນັກງານຂອງສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ;
8. ສະເໜີສ້າງຕັ້ງ, ປັບປຸງ ຫຼື ລົບລ້າງກົງຈັກການຈັດຕັ້ງຂອງສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ;
9. ປະຕິບັດນະໂຍບາຍຕໍ່ພະນັກງານລັດຖະກອນ ແລະ ຫົວໜ່ວຍແຮງງານດີເດັ່ນ ໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບ ແຮງງານ;
10. ຄົ້ນຄວ້າສ້າງຫຼັກສູດ, ຈັດຫາອຸປະກອນ ແລະ ດໍາເນີນການຝຶກອົບຮົມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ທັງຢູ່ໃນສູນ ແລະ ນອກສູນ;
11. ຄົ້ນຄວ້າສ້າງລະບົບ ແລະ ກົນໄກການໃຫ້ຄໍາແນະນໍາ ກ່ຽວກັບການປ້ອງກັນການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
12. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສົ່ງເສີມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
13. ທົດສອບ ແລະ ຢັ້ງຢືນມາດຕະຖານຂອງອຸປະກອນ ແລະ ເຄື່ອງມືປ້ອງກັນສ່ວນບຸກຄົນທີ່ນໍາໃຊ້ໃນສະຖານທີ່ເຮັດວຽກ;
14. ບໍລິການດ້ານການປະເມີນຄວາມສ່ຽງ, ວິເຄາະ ແລະ ວິໄຈ ສະພາບແວດລ້ອມໃນການເຮັດວຽກ ໃຫ້ແກ່ຫົວໜ່ວຍແຮງງານ;
15. ບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ແກ່ຜູ້ອອກແຮງງານ ລວມທັງສົມທົບພາກສ່ວນທີ່ກ່ຽວຂ້ອງ ກວດສຸຂະພາບຜູ້ອອກແຮງງານ ກ່ອນຈະສົ່ງໄປເຮັດວຽກຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດ ທີ່ສະເໜີຂໍບັດອະນຸຍາດເຮັດວຽກຢູ່ ສປປ ລາວ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 36 ການສ້າງຜູ້ຊ່ຽວຊານສະເພາະດ້ານ**

ສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ ແລະ ສະຖາບັນການສຶກສາ ທັງພາກລັດ ແລະ ເອກະຊົນ ຕ້ອງສ້າງຊ່ຽວຊານສະເພາະດ້ານ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອຮັບປະກັນ ໃຫ້ທຸກຂົງເຂດວຽກງານ ເຊັ່ນ: ວິສະວະກອນ, ນັກສຸຂາອານາໄມ, ແພດແຮງງານ, ພະຍາບານ, ນັກວິໄຈ.

## ໝວດ 2
## ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ

**ມາດຕາ 37 ໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ**

ໜ່ວຍງານບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນສະຖາບັນ, ສູນ, ບໍລິສັດ, ໂຮງໝໍ ຫຼື ຄລີນິກ ທີ່ດຳເນີນການບໍລິການດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ ສປປ ລາວ.

**ມາດຕາ 38 ການສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຕ້ອງຍື່ນຄຳຮ້ອງ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 39 ການພິຈາລະນາຄຳຮ້ອງຂໍສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ**

ພາຍຫຼັງທີ່ກະຊວງແຮງງານ ໄດ້ຮັບໜັງສືສະເໜີຂໍສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຈາກຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງແລ້ວ ຕ້ອງຄົ້ນຄວ້າ ແລະ ມີຄຳເຫັນທາງ ດ້ານວິຊາການເປັນລາຍລັກອັກສອນ ສົ່ງໃຫ້ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ພາຍໃນກຳນົດ ແປດ ວັນ ລັດຖະການ.

**ມາດຕາ 40 ເງື່ອນໄຂຂອງການສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ**

ການສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບ ແຮງງານ ມີເງື່ອນໄຂດັ່ງນີ້:

1. ມີທຶນ, ສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;
2. ມີນັກວິຊາການທີ່ມີຄວາມຮູ້ລະດັບປະລິນຍາຕີຂຶ້ນໄປ ແລະ ມີປະສົບການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ແຕ່ ສາມ ປີ ຂຶ້ນໄປ ໂດຍມີໃບຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;
3. ໄດ້ຮັບການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ໃນສະຖານການກະທຳຜິດ ໂດຍເຈດຕະນາ.

**ມາດຕາ 41 ການໂຈະການສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ**

ການສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ຂໍສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ຜູ້ຂໍສ້າງຕັ້ງບໍ່ປະຕິບັດຕາມເປົ້າໝາຍທີ່ອະນຸຍາດ ຫຼື ລະເມີດກົດໝາຍທີ່ກ່ຽວຂ້ອງ.

ຖ້າຜູ້ຂໍສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຫາກບໍ່ປັບປຸງ ແລະ ແກ້ໄຂໃຫ້ຖືກຕ້ອງຕາມການແຈ້ງເຕືອນ ສອງ ຄັ້ງ, ຄັ້ງລະ ສາມສິບ ວັນ ລັດຖະການ ຂະແໜງການທີ່ກ່ຽວຂ້ອງ ສັ່ງໂຈະທາງດ້ານວິຊາການ ແລະ ແຈ້ງໃຫ້ອົງການທີ່ອະນຸຍາດ ແລະ ອອກໃບທະບຽນວິສາຫະກິດຊາບ.

ມາດຕາ 42 ການຖອນໃບອະນຸຍາດທາງດ້ານວິຊາການ

ຜູ້ຂໍສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ ຫາກບໍ່ປະຕິບັດຕາມການໂຈະດັ່ງກ່າວ ຂະແໜງການທີ່ກ່ຽວຂ້ອງ ຕ້ອງຖອນໃບອະນຸຍາດທາງດ້ານວິຊາການ ແລ້ວສະເໜີໃຫ້ອົງການອະນຸຍາດ ແລະ ອອກໃບທະບຽນວິສາຫະກິດ ພິຈາລະນາຖອນ ໃບທະບຽນວິສາຫະກິດ.

**ມາດຕາ 43 ການສະເໜີຕໍ່ການໂຈະ ຫຼື ການຖອນ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ຖືກໂຈະ ຫຼື ຖອນໃບທະບຽນວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ແລະ 39 ຂອງດຳລັດສະບັບນີ້ ສາມາດສະເໜີຕໍ່ຂະແໜງການດັ່ງກ່າວພິຈາລະນາຄືນກ່ຽວກັບການໂຈະ ຫຼື ການຖອນ ດັ່ງກ່າວ ຖ້າຫາກສາມາດພິສູດໄດ້ວ່າຕົນປະຕິບັດຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງແລ້ວ.

**ມາດຕາ 44 ປະເພດການບໍລິການຂອງໜ່ວຍງານຄວາມປອດໄພ ແລະ ສຸຂະພາບແຮງງານ**

ປະເພດການບໍລິການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ມີດັ່ງນີ້:

1. ການປະເມີນ ແລະ ການຄວບຄຸມຄວາມສ່ຽງ ທີ່ເປັນອັນຕະລາຍ ໃນສະຖານທີ່ເຮັດວຽກ;
2. ການໃຫ້ຄຳປຶກສາດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ຝຶກອົບຮົມ;
3. ການດຳເນີນການວັດແທກດ້ານມາດຕະຖານສິ່ງແວດລ້ອມ ໃນສະຖານທີ່ເຮັດວຽກ;
4. ການກວດ ແລະ ຢັ້ງຢືນສຸຂະພາບຂອງຜູ້ອອກແຮງງານ;
5. ການນຳເຂົ້າ ແລະ ຈຳໜ່າຍເຄື່ອງວັດແທກ, ອຸປະກອນຊູຊີບ ແລະ ອຸປະກອນປ້ອງກັນສ່ວນບຸກຄົນ.

## ພາກທີ IV

## ລາຍຮັບ ຂອງຄວາມປອດໄພ ແລະ ສຸຂະພາບແຮງງານ

ມາດຕາ 45 ແຫຼ່ງລາຍຮັບ

ແຫຼ່ງລາຍຮັບ ຂອງຄວາມປອດໄພ ແລະ ສຸຂະພາບແຮງງານ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ອົງການຈັດຕັ້ງສາກົນ ຈາກພາຍໃນ ແລະ ຕ່າງປະເທດ;
3. ສາມສິບສ່ວນຮ້ອຍຂອງຄ່າປັບໃໝ ຜູ້ລະເມີດດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ແຫຼ່ງອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 46 ເປົ້າໝາຍນຳໃຊ້**

ລາຍຮັບ ຄວາມປອດໄພ ແລະ ສຸຂະພາບແຮງງານ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການຄົ້ນຄວ້າສ້າງ ແລະ ປັບປຸງນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ການໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ ແລະ ລະບຽບການດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ;
3. ການສ້າງລະບົບຖານຂໍ້ມູນ ແລະ ເກັບກຳສະຖິຕິກ່ຽວກັບອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
4. ການຕິດຕາມກວດກາ ແລະ ປະເມີນຄວາມສ່ຽງ ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ;
5. ການຄົ້ນຄວ້າສ້າງຫຼັກສູດ ແລະ ຝຶກອົບຮົມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
6. ການບໍລິຫານວຽກງານຂອງສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ;
7. ເປົ້າໝາຍອື່ນຕາມການຕົກລົງຂອງຫົວໜ້າສູນ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 47 ຂໍ້ຫ້າມ ສໍາລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ**

ຫ້າມເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດອໍານາດ, ໃຊ້ອໍານາດເກີນຂອບເຂດ;
2. ຮັບເອົາ, ທວງເອົາ, ຕິກລົງຮັບ ຫຼື ໃຫ້ສິນບົນ;
3. ເມີນເສີຍໃນການລາຍງານການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ຊ່ວຍຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ປົກປິດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
5. ເປີດເຜີຍຂໍ້ມູນຂອງການສືບສວນ-ສອບສວນ ສາເຫດຂອງການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງແຮງງານ;
6. ໃຫ້ຜູ້ອື່ນນໍາໃຊ້ບັດເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 48 ຂໍ້ຫ້າມ ສໍາລັບຜູ້ໃຊ້ແຮງງານ**

ຫ້າມຜູ້ໃຊ້ແຮງງານ ມີພຶດຕິກໍາ ດັ່ງນີ້:

1. ປິດບັງ, ເຊື່ອງອໍາ, ບິດເບືອນຂໍ້ມູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
2. ໃຫ້ສິນບົນແກ່ເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;
3. ປະຕິເສດການສະໜອງອຸປະກອນປ້ອງກັນສ່ວນບຸກຄົນ, ອຸປະກອນຊູຊີບ, ອຸປະກອນປະຖົມພະຍາບານ ແລະ ການກວດສຸຂະພາບແຮງງານ;
4. ນໍາເຂົ້າ ແລະ ນໍາໃຊ້ສານເຄມີທີ່ຕ້ອງຫ້າມ;
5. ສະໜອງເຄື່ອງມື, ອຸປະກອນການປ້ອງກັນ ທີ່ບໍ່ໄດ້ມາດຕະຖານ ໃຫ້ແກ່ຜູ້ອອກແຮງງານ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 49 ຂໍ້ຫ້າມສໍາລັບຜູ້ອອກແຮງງານ**

ຫ້າມຜູ້ອອກແຮງງານ ມີພຶດຕິກໍາ ດັ່ງນີ້:

1. ລະເມີດ ກົດລະບຽບຂອງຫົວໜ່ວຍແຮງງານ ແລະ ລະບຽບການກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ປິດບັງ, ເຊື່ອງອໍາ, ບິດເບືອນຂໍ້ມູນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ;
3. ປະຕິເສດການເຂົ້າຮ່ວມກິດຈະກໍາຕ່າງໆກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ປະຕິເສດ ການນໍາໃຊ້ອຸປະກອນປ້ອງກັນສ່ວນບຸກຄົນ, ອຸປະກອນຊູຊີບ, ອຸປະກອນປະຖົມພະຍາບານ ແລະ ການກວດສຸຂະພາບແຮງງານ ທີ່ຜູ້ໃຊ້ແຮງງານສະໜອງໃຫ້;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VI
## ຄະນະກໍາມະການຄວາມປອດໄພ ແລະ ສຸຂະພາບແຮງງານ

**ມາດຕາ 50 ຄະນະກໍາມະການຄວາມປອດໄພ ແລະ ສຸຂະພາບແຮງງານ**

ຄະນະກໍາມະການຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນການຈັດຕັ້ງບໍ່ປະຈໍາການ ຊຶ່ງປະກອບມີ:

1. ຄະນະກໍາມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນສູນກາງ;

2. ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນແຂວງ.

ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ແຕ່ລະຂັ້ນ ມີກອງເລຂາຊ່ວຍວຽກ.

ມາດຕາ 51 ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນສູນກາງ

ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນສູນກາງ ຖືກແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການ, ຕິດຕາມກວດກາ ແລະ ຊຸກຍູ້ບັນດາກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນຂອບເຂດທົ່ວປະເທດ ໂດຍມີສູນຄວາມປອດໄພ ແລະ ສຸຂະພາບແຮງງານ ແຫ່ງຊາດ ເປັນກອງເລຂາຊ່ວຍວຽກ.

ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນສູນກາງ ປະກອບດ້ວຍ:

1. ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນປະທານ
2. ຮອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງ
3. ຮອງປະທານສູນກາງສະຫະພັນກຳມະບານລາວ ເປັນຮອງ
4. ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຮອງ
5. ຕາງໜ້າຈາກກະຊວງສາທາລະນະສຸກ ເປັນຄະນະ
6. ຕາງໜ້າກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ
7. ຕາງໜ້າກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ
8. ຕາງໜ້າກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ
9. ຕາງໜ້າກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ
10. ຕາງໜ້າກະຊວງສຶກສາທິການ ແລະ ກິລາ ເປັນຄະນະ
11. ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ
12. ຕາງໜ້າກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຄະນະ
13. ຕາງໜ້າກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ

ມາດຕາ 52 ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນແຂວງ

ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນແຂວງ ຖືກແຕ່ງຕັ້ງໂດຍທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ. ມີພາລະບົດບາດເປັນເສນາທິການ ໃຫ້ອົງການປົກຄອງຂັ້ນແຂວງ ໃນການຕິດຕາມກວດກາ ແລະ ຊຸກຍູ້ບັນດາພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ເປັນກອງເລຂາຊ່ວຍວຽກ.

ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນແຂວງ ປະກອບດ້ວຍ:

1. ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ,ນະຄອນຫຼວງ ເປັນປະທານ
2. ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ ເປັນຮອງ
3. ຮອງປະທານສະຫະພັນກຳມະບານ ແຂວງ, ນະຄອນຫຼວງ ເປັນຮອງ
4. ຮອງປະທານສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ ເປັນຮອງ
5. ຕາງໜ້າພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ເປັນຄະນະ
6. ຕາງໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເປັນຄະນະ
7. ຕາງໜ້າພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ເປັນຄະນະ
8. ຕາງໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນຄະນະ
9. ຕາງໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ ເປັນຄະນະ
10. ຕາງໜ້າພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເປັນຄະນະ

11. ຕາງໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນຄະນະ
12. ຕາງໜ້າພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ,ນະຄອນຫຼວງ ເປັນຄະນະ
13. ຕາງໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ ເປັນຄະນະ

**ມາດຕາ 53 ລະບຽບປະຊຸມຂອງຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ**

ຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ແຕ່ລະຂັ້ນ ຈັດກອງປະຊຸມຂອງຕົນຂຶ້ນ ໃນທຸກ ຫົກເດືອນ, ໃນກໍລະນີຈຳເປັນ ສາມາດຈັດກອງປະຊຸມວິສາມັນຂຶ້ນກໍໄດ້.

## ພາກທີ VII
## ອົງການສາມຝ່າຍ

### ໝວດທີ 1
### ອົງການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ

**ມາດຕາ 54 ອົງການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢ່າງລວມສູນ ແລະ ເປັນ ເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຮັບຜິດຊອບໂດຍ ກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການກ່ຽວກັບຄວາມປອດໄພ ແລະ ສຸຂະພາບ ແຮງງານ ເພື່ອສະເໜີລັດຖະບານ ພິຈາລະນາ ພ້ອມທັງຈັດຕັ້ງປະຕິບັດ;
2. ຊີ້ນຳ, ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ຂອງສູນຄວາມປອດໄພ ແລະ ສຸຂະ ພາບແຮງງານ ແຫ່ງຊາດ;
3. ພິຈາລະນາ ອອກໃບອະນຸຍາດຂໍສ້າງຕັ້ງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ພົວພັນ ແລະ ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງ ປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
5. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ;
6. ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງ ງານ;
7. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ພະແນກແຮງງານ ແລະ ສະຫວັດດີການ ສັງຄົມ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການກ່ຽວກັບ ຄວາມປອດໄພ ແລະ ສຸຂະ ພາບແຮງງານ;
2. ໂຄສະນາ ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;

3. ຊີ້ນຳ, ຕິດຕາມ ກວດກາ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ພົວພັນ ແລະ ປະສານສົມທົບກັບພະແນກການ ແລະ ອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
5. ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວ ກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
6. ຕິດຕາມ ແລະ ເກັບກຳຂໍ້ມູນຂ່າວສານກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
7. ຊີ້ນຳ, ຕິດຕາມ ແລະ ຄຸ້ມຄອງການເຄື່ອນໄຫວຂອງໜ່ວຍງານບໍລິການຄວາມປອດໄພ ແລະ ສຸຂະພາບແຮງງານ;
8. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຕາມການມອບໝາຍຂອງຂັ້ນເທິງ;
9. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ອົງການປົກຄອງຂັ້ນແຂວງ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ**

ໃນການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ເຜີຍແຜ່ກົດໝາຍ ແລະ ລະບຽບການກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
3. ຕິດຕາມ ກວດກາ, ຊຸກຍູ້ ແລະ ຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ພົວພັນ ແລະ ປະສານສົມທົບກັບຫ້ອງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
5. ສະເໜີການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
6. ຕິດຕາມ ແລະ ເກັບກຳຂໍ້ມູນຂ່າວສານກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
7. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ອົງການປົກຄອງຂັ້ນເມືອງ ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຂັ້ນແຂວງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ເປັນເຈົ້າການໃນການສ້າງ, ປັບປຸງນິຕິກຳກ່ຽວກັບການຕິດຕາມ, ປະເມີນ ແລະ ຄຸ້ມຄອງສຸຂະພາບ ຂອງຜູ້ອອກແຮງງານ;
3. ຊີ້ນຳ, ຄຸ້ມຄອງວຽກງານສຸຂານາໄມ, ການຄວບຄຸມ ແລະ ປ້ອງກັນພະຍາດລະບາດ ແລະ ພະຍາດຕິດແປດອື່ນ ທີ່ອາດຈະເກີດຂຶ້ນ ຢູ່ໃນສະຖານທີ່ເຮັດວຽກ;
4. ຊີ້ນຳວຽກງານກວດສຸຂະພາບ ຂອງຜູ້ອອກແຮງງານ ລວມທັງການປິ່ນປົວ, ການປິ່ນປົວ, ການບຳບັດ ແລະ ການຢັ້ງຢືນສຸຂະພາບ ຂອງຜູ້ເຄາະຮ້າຍຈາກອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ພ້ອມທັງບັນທຶກ ຂໍ້ມູນສົ່ງໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
5. ພິຈາລະນາອະນຸຍາດສ້າງຕັ້ງໜ່ວຍງານບໍລິການກວດ ແລະ ຢັ້ງຢືນສຸຂະພາບຂອງຜູ້ອອກແຮງງານ;

6. ສ້າງພະນັກງານວິຊາຊີບສະເພາະດ້ານ ເຊັ່ນ ພະຍາບານ, ແພດ, ທ່ານໝໍຊ່ຽວຊານພະຍາດອາຊີບ ແລະ ນັກສຸຂາອະນາໄມ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງກະຊວງອື່ນທີ່ກ່ຽວຂ້ອງ**

ສິດ ແລະ ໜ້າທີ່ຂອງກະຊວງອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ມີດັ່ງນີ້:

1. ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ໃນການສ້າງມາດຕະຖານຂອງໂຮງງານ, ອາຄານ ແລະ ສະຖານທີ່ເຮັດວຽກ; ຄົ້ນຄວ້າອະນຸຍາດນຳເຂົ້າສານເຄມີ, ເຄື່ອງຈັກ, ອຸປະກອນຮັບໃຊ້ ການຜະລິດ; ກວດກາລະບົບມາດຕະຖານໂຮງງານ, ການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນການຜະລິດ;
2. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງ, ຕິດຕາມ ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຂອງຫົວໜ່ວຍແຮງງານ ແລະ ວາງມາດຕະການ ຕໍ່ຫົວໜ່ວຍແຮງງານ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ຊຸມຊົນ ທີ່ຢູ່ໃກ້ຄຽງ;
3. ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ໃນການສ້າງລະບຽບການ ແລະ ມາດຕະຖານຄວາມປອດໄພ ແລະ ສຸຂະພາບແຮງງານ ສຳລັບບໍລິສັດກໍ່ສ້າງ, ບໍລິສັດບໍລິການຂົນສົ່ງທາງບົກ, ທາງນ້ຳ ແລະ ທາງອາກາດ;
4. ກະຊວງພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ ໃນການສ້າງລະບຽບການ ແລະ ມາດຕະຖານຄວາມປອດໄພ ແລະ ສຸຂະພາບແຮງງານ ສຳລັບບໍລິສັດ ທີ່ດຳເນີນທຸລະກິດແຮ່ທາດ ແລະ ພະລັງງານໄຟຟ້າ;
5. ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ໃນການໂຄສະນາ, ເຜີຍແຜ່ຂໍ້ມູນຂ່າວສານ, ແນະນຳ, ໃຫ້ຄວາມຮູ້ແກ່ຊາວກະສິກອນ ໃນວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ; ສ້າງລະບຽບການສະເພາະກ່ຽວກັບການສະໜອງອຸປະກອນເຄື່ອງມື, ການນຳໃຊ້ສານເຄມີ, ລະບົບປ້ອງກັນ ແລະ ແກ້ໄຂບັນຫາດ້ານຄວາມປອດໄພແຮງງານ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນ;
6. ກະຊວງສຶກສາທິການ ແລະ ກິລາ ມີສິດ ແລະ ໜ້າທີ່ ໃນການສ້າງຫຼັກສູດຄວາມປອດໄພ ແລະ ສຸຂະພາບແຮງງານ ໃນລະດັບເຕັກນິກຂຶ້ນໄປ ເພື່ອສ້າງໃຫ້ມີວິຊາຊີບສະເພາະດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ;
7. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງມາດຕະຖານ, ອຸປະກອນ, ເຄື່ອງມື ແລະ ລະບົບປ້ອງກັນຄວາມປອດໄພ ແລະ ສຸຂະພາບແຮງງານ;
8. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ໃນການຜະລິດສື່ໂຄສະນາເພື່ອເຜີຍແຜ່ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ.

## ໝວດທີ 2
## ອົງການຜູ້ຕາງໜ້າ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງອົງການຜູ້ຕາງໜ້າຜູ້ໃຊ້ແຮງງານ**

ໃນວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ອົງການຜູ້ຕາງໜ້າຜູ້ໃຊ້ແຮງງານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຂົ້າຮ່ວມຄົ້ນຄວ້າ ແລະ ປຶກສາຫາລືໃນການສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບ ແຮງງານ;
2. ປຸກລະດົມ ແລະ ຊຸກຍູ້ໃຫ້ຜູ້ໃຊ້ແຮງງານ, ສາມະຄົມທຸລະກິດ, ກຸ່ມທຸລະກິດ ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
3. ໃຫ້ຄຳແນະນຳ, ຄວາມຮູ້, ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ແກ່ຜູ້ໃຊ້ແຮງງານ, ສະມາຄົມທຸລະກິດ, ກຸ່ມທຸລະກິດ ແລະ ອົງການທີ່ ຂຶ້ນກັບຕົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 61 ສິດ ແລະ ໜ້າທີ່ ຂອງອົງການຜູ້ຕາງໜ້າຜູ້ອອກແຮງງານ

ອົງການຜູ້ຕາງໜ້າຜູ້ອອກແຮງງານມີໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຕົ້ນຕໍ ດັ່ງນີ້:

1. ເຂົ້າຮ່ວມຄົ້ນຄວ້າ ແລະ ປຶກສາຫາລືໃນການສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
2. ສຶກສາອົບຮົມ, ປຸກລະດົມ, ປຸກຈິດສຳນຶກ ແລະ ຊຸກຍູ້ໃຫ້ຜູ້ອອກແຮງງານ, ຜູ້ຕາງໜ້າຜູ້ອອກແຮງງານ ແລະ ໜ່ວຍກຳມະບານ ຢູ່ໃນສະຖານທີ່ເຮັດວຽກ ປະຕິບັດກົດໝາຍ, ລະບຽບການ ທີ່ກ່ຽວຂ້ອງກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ;
3. ໃຫ້ຄຳປຶກສາ, ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ຜູ້ອອກແຮງງານ, ຜູ້ຕາງໜ້າຜູ້ອອກແຮງງານ ແລະ ໜ່ວຍກຳມະບານ ຢູ່ໃນສະຖານທີ່ເຮັດວຽກ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VIII
## ການກວດກາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ

ມາດຕາ 62 ອົງການກວດກາວຽກງານຄວາມປອດໄພ ແລະ ສຸຂະພາບ ແຮງງານ

ອົງການກວດກາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຊຶ່ງແມ່ນອົງການດຽວກັບອົງການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ຂອງດຳລັດສະບັບນີ້.

ມາດຕາ 63 ເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ

ເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນພະນັກງານຂອງອົງການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຖືກແຕ່ງຕັ້ງໂດຍທ່ານ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຕິດຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນສະຖານທີ່ເຮັດວຽກ, ຮັບປະກັນໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານປະຕິບັດຕາມສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຕົນ.

ມາດຕາ 64 ສິດ ຂອງເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ

ເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ມີສິດ ດັ່ງນີ້:

1. ເຂົ້າໄປດຳເນີນການກວດກາຢູ່ທຸກຫົວໜ່ວຍແຮງງານ ແລະ ໃນສະຖານທີ່ເຮັດວຽກໄດ້ທຸກເວລາ ທັງກາງເວັນ ແລະ ກາງຄືນ ໂດຍມີການແຈ້ງລ່ວງໜ້າ ຫຼື ບໍ່ຈຳເປັນແຈ້ງລ່ວງໜ້າ ກໍໄດ້ໃນກໍລະນີຈຳເປັນ;
2. ດຳເນີນການກວດກາທຸກຂະບວນການເຮັດວຽກ ຢູ່ພາຍໃນຫົວໜ່ວຍແຮງງານເປັນຕົ້ນ, ການນຳໃຊ້ເຄື່ອງຈັກ, ເຄື່ອງມື ແລະ ວັດຖຸປະກອບທຸກຢ່າງ;
3. ສອບຖາມເອົາຂໍ້ມູນ, ເອກະສານທີ່ກ່ຽວຂ້ອງ ຈາກຜູ້ໃຊ້ແຮງງານ ຫຼື ຜູ້ຕາງໜ້າຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ຫຼື ຜູ້ຕາງໜ້າຜູ້ອອກແຮງງານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;
4. ອັດສຳເນົາເອົາທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງເອກະສານ ທີ່ເຫັນວ່າມີຄວາມຈຳເປັນ ຕໍ່ວຽກງານກວດກາ;
5. ເກັບເອົາຕົວຢ່າງ ສິ້ນສ່ວນວັດຖຸ ຫຼື ທາດເຄມີຕ່າງໆ ເພື່ອນຳໄປວິເຄາະ, ວິໄຈ ໂດຍຜູ້ຊ່ຽວຊານສະເພາະດ້ານ ຊຶ່ງມີການແຈ້ງໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ຕາງໜ້າຜູ້ໃຊ້ແຮງງານຊາບນຳ;
6. ເຊີນຜູ້ຊ່ຽວຊານ ແລະ ນັກວິຊາການທີ່ກ່ຽວຂ້ອງ ເຂົ້າຮ່ວມການກວດກາ, ວິເຄາະ ແລະ ວິໄຈ;
7. ບັນທຶກພາບນິ່ງ, ພາບເຄື່ອນໄຫວ ແລະ ສຽງ ເພື່ອນຳໄປວິເຄາະ, ວິໄຈ ແລະ ນຳໃຊ້ເປັນຫຼັກຖານ;

8. ສະແດງຕົວ ໂດຍການແຈ້ງບັດເຈົ້າໜ້າທີ່ກວດກາ ຫຼື ບໍ່ສະແດງຕົວຕໍ່ຫົວໜ່ວຍແຮງງານກໍໄດ້ ໃນກໍລະນີ ຫາກເຫັນວ່າການສະແດງຕົວນັ້ນ ອາດຈະມີຜົນກະທົບຕໍ່ການປະຕິບັດໜ້າທີ່ ຫຼື ອາດມີຄວາມເປັນອັນຕະລາຍຕໍ່ຕົນເອງ;
9. ດໍາເນີນການວັດແທກສະພາບແວດລ້ອມ ຢູ່ໃນສະຖານທີ່ເຮັດວຽກ ໂດຍການນໍາໃຊ້ອຸປະກອນຕ່າງໆ ໃນການວັດແທກ ເພື່ອກວດເບິ່ງສະພາບແວດລ້ອມທາງກາຍະພາບ ລວມທັງຄຸນນະພາບອາກາດ ຢູ່ພາຍໃນອາຄານ ເຊັ່ນ: ສານເຄມີ, ລະດັບຝຸ່ນຢູ່ໃນອາກາດ, ລະດັບຂອງສຽງດັງ, ແສງສະຫວ່າງ ແລະ ອື່ນໆ;
10. ສັ່ງໃຫ້ຜູ້ໃຊ້ແຮງງານປັບປຸງ, ແກ້ໄຂ ໃຫ້ຖືກຕ້ອງພາຍໃນກໍານົດເວລາທີ່ເໝາະສົມ ຫາກພົບເຫັນສະພາບແວດລ້ອມ ໃນສະຖານທີ່ເຮັດວຽກ ທີ່ອາດຈະກໍ່ໃຫ້ເກີດຄວາມບໍ່ປອດໄພ ແກ່ຜູ້ອອກແຮງງານ;
11. ສັ່ງໂຈະການນໍາໃຊ້ເຄື່ອງຈັກ ຫຼື ອຸປະກອນທັງໝົດ ຫຼື ບາງສ່ວນ ໃນກໍລະນີ ເຫັນວ່າເຄື່ອງຈັກ ຫຼື ອຸປະກອນນັ້ນ ບໍ່ມີຄວາມປອດໄພຕໍ່ຜູ້ອອກແຮງງານ ແຕ່ກໍານົດເວລາການໂຈະນັ້ນ ບໍ່ໃຫ້ເກີນ ສິບຫ້າ ວັນ ຊຶ່ງຜູ້ໃຊ້ແຮງງານ ຕ້ອງຈ່າຍຄ່າແຮງງານໃຫ້ຜູ້ອອກແຮງງານເຕັມຕາມປົກກະຕິ;
12. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 65 ໜ້າທີ່ ຂອງເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ**

ເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບ ແຮງງານ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສ້າງແຜນການ, ໂຄງການ, ແຜນປະຕິບັດງານ ແລະ ຂັ້ນຕອນ ກ່ຽວກັບການກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ປະຈໍາເດືອນ, ປະຈໍາໄຕມາດ ແລະ ປະຈໍາປີ;
2. ບັງຄັບປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນຫົວໜ່ວຍແຮງງານ;
3. ປະເມີນຄວາມສ່ຽງ ແລະ ສິ່ງທີ່ເປັນອັນຕະລາຍ ໃນສະຖານທີ່ເຮັດວຽກ ທີ່ກ່ຽວຂ້ອງກັບຄວາມປອດໄພ ແລະ ສຸຂະພາບແຮງງານ;
4. ກວດກາສະພາບແວດລ້ອມ ການເຮັດວຽກ ແລະ ສຸຂານາໄມ ເພື່ອປັບປຸງສະພາບການເຮັດວຽກ ແລະ ປ້ອງກັນອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ໃນສະຖານທີ່ເຮັດວຽກ;
5. ໃຫ້ຄໍາປຶກສາ, ແນະນໍາ ແລະ ການສະໜອງຂໍ້ມູນດ້ານວິຊາການ ໃຫ້ແກ່ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ;
6. ສືບສວນ-ສອບສວນ ອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ເພື່ອຊອກຫາສາເຫດ ແລະ ກໍານົດມາດຕະການຄວບຄຸມ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດການກວດກາ;
8. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 66 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 67 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດໍາລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

ມາດຕາ 68 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ໃນສະຖານເບົາ ຫຼື ເປັນເທື່ອທຳອິດ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກສຶກສາອົບຮົມ.

ມາດຕາ 69 ມາດຕະການທາງວິໄນ

ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ, ຂາດຄວາມຮັບຜິດຊອບ ຕໍ່ໜ້າທີ່ວຽກງານ ທີ່ຕົນໄດ້ຮັບມອບໝາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ.

ມາດຕາ 70 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ດັ່ງນີ້:

1. ບໍ່ອານຸຍາດໃຫ້ເຈົ້າໜ້າທີ່ກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ເຂົ້າໄປດຳເນີນການກວດກາ ຢູ່ໃນຫົວໜ່ວຍແຮງງານ ຈະຖືກປັບໃໝ ຫ້າລ້ານ ກີບ ຕໍ່ຄັ້ງ;
2. ບໍ່ມີລະບຽບການພາຍໃນ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ໃນຫົວໜ່ວຍແຮງງານ ຈະຖືກປັບໃໝ ຫ້າລ້ານ ກີບ ຕໍ່ຄັ້ງ ສຳລັບຫົວໜ່ວຍແຮງງານ ທີ່ມີຜູ້ອອກແຮງງານ ໜ້ອຍກວ່າໜຶ່ງຮ້ອຍຄົນ ແລະ ສິບລ້ານ ກີບ ຕໍ່ຄັ້ງ ສຳລັບຫົວໜ່ວຍແຮງງານ ທີ່ມີຜູ້ອອກແຮງງານ ຫຼາຍກວ່າໜຶ່ງຮ້ອຍຄົນ;
3. ບໍ່ປະຕິບັດຕາມການຕັກເຕືອນ ຂອງເຈົ້າໜ້າກວດກາຄວາມປອດໄພ ແລະ ສຸຂະພາບແຮງງານ ເປັນຕົ້ນ ບໍ່ປັບປຸງ, ບໍ່ປ່ຽນແປງ, ບໍ່ຢຸດເຊົາການເຮັດວຽກ ແລະ ການນຳໃຊ້ເຄື່ອງຈັກ, ອຸປະກອນ ແລະ ເຄື່ອງປ້ອງກັນສ່ວນບຸກຄົນ ຈະຖືກປັບໃໝ ສາມລ້ານ ກີບ ຕໍ່ຄັ້ງ;
4. ບໍ່ປະຕິບັດຕາມລະບຽບການຄວາມປອດໄພ ແລະ ສຸຂະພາບແຮງງານ, ບໍ່ເອົາໃຈໃສ່ສ້າງສະພາບການເຮັດວຽກ ທີ່ມີຄວາມປອດໄພ ຊຶ່ງພາໃຫ້ເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ແລະ ເຮັດໃຫ້ຜູ້ອອກແຮງງານເສຍຊີວິດ ຈະຖືກປັບໃໝ ຊາວລ້ານກີບ ຕໍ່ຜູ້ເສຍຊີວິດໜຶ່ງຄົນ;
5. ບໍ່ມີພະນັກງານ ຫຼື ໜ່ວຍງານຮັບຜິດຊອບດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ຈະຖືກປັບໃໝ ສາມລ້ານ ກີບ ຕໍ່ຄັ້ງ;
6. ບໍ່ກວດສຸຂະພາບຂອງຜູ້ອອກແຮງງານ ຕາມລະບຽບການ ຈະຖືກປັບໃໝ ຫ້າແສນ ກີບ ຕໍ່ຄົນ ຕໍ່ຄັ້ງ;
7. ນຳໃຊ້ຜູ້ອອກແຮງງານ ແມ່ຍິງທີ່ຖືພາ ຫຼື ຢູ່ໃນໄລຍະລ້ຽງລູກນ້ອຍ ທີ່ມີອາຍຸຕໍ່າກວ່າ ສິບສອງເດືອນ ເຮັດວຽກເພີ່ມໂມງ ຫຼື ເຮັດວຽກທີ່ກົດໝາຍແຮງງານ ບໍ່ອະນຸຍາດໃຫ້ເຮັດ ຈະຖືກປັບໃໝ ຫ້າລ້ານ ກີບ ຕໍ່ຄົນ ຕໍ່ຄັ້ງ;
8. ໃຫ້ຜູ້ອອກແຮງງານເຮັດວຽກເພີ່ມໂມງ ເກີນກຳນົດເວລາ ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍ ວ່າດ້ວຍແຮງງານ ຈະຖືກປັບໃໝ ສອງລ້ານ ກີບ ຕໍ່ຄົນ ຕໍ່ຄັ້ງ.

ການປະຕິບັດມາດຕະການປັບໃໝ ບໍ່ໃຫ້ເກີນສາມຄັ້ງ, ຖ້າຫາກຍັງມີການລະເມີດ ຈະຖືກນຳໃຊ້ມາດຕະການອື່ນ ເຊັ່ນ: ການໂຈະ ຫຼື ຖອນໃບອະນຸຍາດດ□ເນີນທຸລະກິດ.

ມາດຕາ 71 ມາດຕະການທາງອາຍາ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມປະມວນກົດໝາຍອາຍາ.

## ພາກທີ X
## ບົດບັນຍັດສຸດທ້າຍ

ມາດຕາ 72 ການຈັດຕັ້ງປະຕິບັດ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດຳລັດ ສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດໍາລັດ ສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ເພື່ອປະກອບລາຍຊື່ເຂົ້າໃນຄະນະ ຕາມທີ່ກໍານົດໃນມາດຕາ 51 ແລະ 52 ຂອງດໍາລັດສະບັບນີ້ ແລ້ວແຈ້ງລາຍຊື່ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອຊາບ.

**ມາດຕາ 73 ຜົນສັກສິດ**

ດໍາລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ